ຜົນການສຳຫຼວດ

ພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວ ປະເທດ ຄັ້ງທີ V ປີ2025

ນຳສະເໜີ ໂດຍ: ທ່ານ ນາງ ເພັດສະໜອນ ສອນ
ຮອງລັດຖະມົນຕີ, ກະຊວງການເງິນ
ຫົວໜ້າສູນສະຖິຕິແຫ່ງຊາດ
ຄະນະຊີ້ນຳລະດັບຊາດ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ
ຄັ້ງທີ IV 2025, ຜູ້ປະຈຳການ

ເນື້ອໃນການນຳສະເໜີ

1. ຈຸດປະສົງ ແລະ ເປົ້າໝາຍ
2. ຂະບວນການ ແລະ ວິທີຈັດຕັ້ງປະຕິບັດການສຳຫຼວດ
3. ຜົນໄດ້ຮັບຕົ້ນຕໍຂອງການຂອງການສຳຫຼວດ
4. ການເຂົ້າເຖິງ ແລະ ການນຳໃຊ້ຜົນ

ຈຸດປະສົງຂອງການສຳຫຼວດ

- ປັບປຸງຖານຂໍ້ມູນ ພົນລະເມືອງ ຂອງ ສ ປປ ລາວ ທີ່ມີລາຍລະອຽດ ກ່ຽວກັບ ການຄຸນລັກສະນະຂອງພົນລະເມືອງ, ອົງປະກອບທາງເພດ ແລະ ອາຍຸ, ຂະຫຍາຍຕົວຂອງພົນລະເມືອງ, ສະພາບການເກີດ, ການເສຍຊີວິດ, ການໂຍກຍ້າຍ, ການຈ້າງງານ, ຄຸນລັກສະນະທີ່ຢູ່ອາໄສ ແລະ ການເຂົ້າເຖິງການບໍລິການອື່ນໆ ເພື່ອຮັບໃຊ້ໃຫ້ແກ່ການສ້າງແຜນນະໂຍບາຍພົນລະເມືອງ, ການຕິດຕາມແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດ, ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ເປົ້າໝາຍການພັດທະນາແບບຍືນຍົງ;
- ເກັບກຳຂໍ້ມູນຈຸດທີ່ຕັ້ງພູມີສາດ ຂອງບັນດາອາຄານ, ທີ່ຢູ່ອາໄສ ແລະ ພື້ນຖານໂຄງລ່າງໃນຂອບເຂດທົ່ວປະເທດ ເພື່ອສ້າງແຜນທີ່ເຂດສຳຫຼວດ ແລະ ແຜນທີ່ບ້ານແບບດີຈີຕອນ, ເພື່ອນຳໃຊ້ໃຫ້ການ ການປັບປຸງພື້ນຖານໂຄງລ່າງທາງດ້ານ ICT ກ້າວໄປສູ່ການຜະລິດຂໍ້ມູນສະຖິຕິດີຈີຕອນ ຮັບໃຊ້ໃຫ້ການອອກແບບການສຳຫຼວດ, ວິເຄາະ, ວິໄຈ ແລະ ເຜີຍແຜ່ຂໍ້ມູນດ້ວຍລະບົບແຜນທີ່ ແລະ ການກຳນົດເປົ້າໝາຍຈັດຕັ້ງປະຕິໂຄງການ ແລະ ແຜນງານຕ່າງໆ ໃຫ້ມີປະສິດທິພາບ;
- ເພື່ອປັບປຸງພື້ນຖານໂຄງລ່າງທາງດ້ານສະຖິຕິ ແລະ ສ້າງຂີດຄວາມອາດສາມາດໃຫ້ແກ່ບຸກຄະລາກອນສະຖິຕິ ໃນການນຳໃຊ້ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນຂະບວນການເກັບກຳ, ວິເຄາະ ແລະ ວິໄຈຂໍ້ມູນ, ການຂຽນບົດລາຍງານ ແລະ ເຜີຍແຜ່ຂໍ້ມູນທີ່ມີປະສິດທິພາບ, ສ້າງຄວາມພ້ອມ ເພື່ອກ້າວໄປສູ່ການຜະລິດຂໍ້ມູນທີ່ມີຄຸນນະພາບ, ທັນສະໄມ ແລະ ດີຈີຕອນ.

ຂອບເຂດ ແລະ ເປົ້າໝາຍຂອງການສຳຫຼວດ

- ພົນລະເມືອງທຸກຄົນທີ່ດຳລົງຊີວິດ ຢູ່ ສ ປປ ລາວເປັນປະຈຳ 6 ເດືອນ ຫຼື ໜ້ອຍກວ່າ 6 ເດືອນ ແຕ່ມີຈຸດປະສົງ ຢູ່ຫຼາຍກວ່າ 6 ເດືອນຂຶ້ນໄປ ທີ່ມີໜ້າຕົວຈິງ ຫຼື ບໍ່ມີໜ້າຊົ່ວຄາວ ໃນເວລາສຳຫຼວດ ເຊິ່ງປະກອບມີ: ພົນລະເມືອງລາວທຸກຄົນ, ຄົນຕ່າງປະເທດ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ອື່ນໆ, ແມ່ນນອນໃນເປົ້າໝາຍຂອງການສຳຫຼວດ;
- ສ່ວນຄົນລາວທີ່ຍ້າຍໄປຢູ່ຕ່າງປະເທດ ໃນໄລຍະ 10 ປີຜ່ານມາ ເລີ່ມແຕ່ປີ 2015 ຫາປີ 2025 ແລະ ຍັງດຳລົງຊີວິດຢູ່ຕ່າງປະເທດໃນໄລຍະຂອງການສຳຫຼວດ ແມ່ນບໍ່ຖືວ່າເປັນພົນລະເມືອງມີໜ້າເປັນປະຈຳ ເຊິ່ງໄດ້ມີການສອບຖາມຈາກຄົວເຮືອນ ແລະ ຈົດນັບແຍກຕ່າງຫາກ;
- ໄລຍະເວລາຂອງການຈົດນັບ ແມ່ນກຳນົດເອົາ 00:00 ຂອງວັນທີ 2/11/2025 ແລະ ຂະບວນການເກັບກຳຂໍ້ມູນແມ່ນເລີ່ມແຕ່ວັນທີ 3/11-28/12/2025.

ຂະບວນການກະກຽມການການສຳຫຼວດ

2021

ການວາງແຜນ ແລະ ຈັດຕັ້ງ ປະຕິບັດ ການສຳຫຼວດພົນລະ ເມືອງ, ກອງປະຊຸມກັບຄູ່ຮ່ວມ ງານໃນເບື້ອງຕົ້ນ

2023

ພັດທະນາແບບສອບຖາມ, ຄູ່ມື, ເຄື່ອງການເກັບກຳຂໍ້ມູນ ແລະ ການ ທົດສອບ

2025

ການສ້າງຂອບສຳຫຼວດ, ກະກຽມການສຳ ຫຼວດໃຫຍ່, ການຝຶກອົບຮົມຄູຝຶກ, ນັກເດີນ ສຳຫຼວດ ແລະ ນັກກວດກາ, ການເກັບກຳຂໍ້ ມູນພາກສະໜາມ ແລະ ການສຳຫຼວດປະ ເມີນຄຸນນະພາບ.

ບັນດາພາກສ່ວນກ່ຽວຂ້ອງທີ່ສຳຄັນມີສ່ວນຮ່ວມໃນແຕ່ລະໄລຍະຂອງການສຳຫຼວດ, ລວມທັງສື່ມວນຊົນ

2022

ໄດ້ຮັບຮອງແຜນສຳຫຼວດພົນລະເມືອງ ແຕ່ງຕັ້ງຄະນະຊີ້ນຳ, ຄະນະຫ້ອງ ການ ສຳຫຼວດ ບັນດາໜ່ວຍງານ ແລະ ຈັດ ສັນແຫຼ່ງທຶນ.

2024

ກະກຽມແຜນທີ່ເຂດສຳຫຼວດ, ດຳເນີນ ການເກັບກຳຂໍ້ມູນ ພາກສະໜາມ, ທົດ ລອງແບບສອບຖາມ ແລະ ການສຳ ຫຼວດທົດລອງ

2026

ການສຳຫຼວດປະເມີນ ຄຸນນະພາບ, ການຈັດ ພິມເຜີຍແຜ່, ການອົໃຈ ລົງເລິກ, ການສ້າງ ບົດ ລາຍງານສະເພາະ

ຂັ້ນຕອນ ແລະ ຂະບວນການຈັດຕັ້ງປະຕິບັດການສຳຫຼວດ

ການຂຶ້ນບັນຊີ ແລະ ສ້າງ ແຜນທີ່ເຂດສຳຫຼວດ

ການສຳຫຼວດພາກ ສະໜາມ

ການສຳຫຼວດປະເມີນ ຄຸນນະພາບ

ແຜນທີ່ເຂດສຳຫຼວດ





ລະບົບເກັບຂໍ້ມູນພາກສະໜາມ



ລະບົບການຕິດຕາມພາກສະໜາມ





ผิมทาามสำาหูอดต้ิมตำ

ຜົນຂອງການສຳຫຼວດພົນລະເມືອງປີ 2025

ພົນລະເມືອງທັງໝົດທີ່ອາໄສເປັນປະຈຳຢູ່ໃນ ສ ປປ ລາວ ປີ 2025

7,241,770 ຄົນ

ຈຳນວນພົນລະເມືອງລາວທັງໝົດທີ່ອາໄສ ຢູ່ຕ່າງປະເທດ (ໃນໄລຍະ10)

313,766 ຄົນ

ຈຳນວນພົນລະເມືອງທັງໝົດ ໃນປີ 2025

7,555,536 ຄົນ

ພົນລະເມືອງທີ່ຈົດນັບໄດ້ຕົວຈິງໃນເວລາສຳຫຼວດ

6,744,701ຄົນ

ຄາດຄະເນພົນລະເມືອງທີ່ຈົດນັບບໍ່ໄດ້ໃນເວລາສຳຫຼວດ

497,069 ຄົນ

ໝາຍເຫດ: ເຫດຜົນຕົ້ນຕໍທີ່ເຮັດໃຫ້ຜົນການສຳຫຼວດໃຫ່ຍ ແລະ ຜົນການສຳຫຼວດປະເມີນຄຸນນະພາບ ໃນປີ 2025 ມີຄວາມແຕກຕ່າງ

- ✓ ໄລຍະເວລາຂອງການສຳຫຼວດໃຫ່ຍ ແລະ ການສຳຫຼວດປະເມີນຄຸນນະພາບຫ່າງກັນປະມານ 2 ເດືອນເຊິ່ງໃນໄລຍະ ດັ່ງກ່າວອາດຈະມີການເຄື່ອນຍ້າຍຂອງພົນລະເມືອງ;
- ✓ ໃນຊ່ວງໄລຍະການສຳຫຼວດໃຫ່ຍ ວັນທີ 3/11-28/12/2025 ເປັນໄລຍະທີ່ມີເຫດການສຳຄັນ ເຊັ່ນ: ບຸນພະທາດ ຫຼວງ ແລະ ກະກຽມສະຫຼອງວັນຊາດຄົບຮອບ 50 ປີ ເຊິ່ງອາດຈະມີການເຄື່ອນຍ້າຍຂອງພົນລະເມືອງຊົ່ວຄາວ, ນອກຈາກນີ້ຍັງເປັນລະດູເກັບກ່ຽວ, ມີພາວະເງິນເຟີ້ ເຊິ່ງອາດຈະກະທົບຕໍ່ການເຄື່ອຍ້າຍໄປຕ່າງປະເທດ ເຮັດໃຫ້ການ ເກັບກຳຂໍ້ມູນບໍ່ຄົບຖ້ວນ ເນື່ອງສະມາຊິກຄົວເຮືອນບໍ່ຢູ່;
- ✓ ການສຳຫຼວດໃນເຂດຫ່າງໄກສອກຫຼີກ ແມ່ນມີຄວາມຫຍຸ້ງຍາກໃນການເຂົ້າເຖິງ ອາດເຮັດໃຫ້ບໍ່ສາມາດເກັບກຳຂໍ້ມູນໄດ້. ນອກຈາກນີ້, ການເກັບກຳຂໍ້ມູນ ໃນເຂດເສດຖະກິດພິເສດ ແມ່ນມີຄວາມຫຍຸ້ງ ໂດຍສະເພາະແມ່ນການເຂົ້າເຖິງ ເຮັດໃຫ້ການເກັບຂໍ້ມູນອາດຈະບໍ່ຄົບຖ້ວນ;
- ✓ ອາດຈະມີການຈົດນັບບໍ່ຄົບຖ້ວນແທ້ ທີ່ເກີດຈາກນັກເດີນສຳຫຼວດບາງຄົນ ອາດຈະເກັບກຳບໍ່ຄົບຖ້ວນ.

ພົນລະເມືອງທັງໝົດລວມທັງຜູ້ທີ່ດຳລົງຊີວິດເປັນປະຈຳຢູ່ ສ ປປ ລາວ ແລະ ຄົນລາວຢູ່ຕ່າງປະເທດ ໃນປີ 2025

ແຂວງ	ພົນລະເມືອງທີ່ດຳລົງຊີວິດເປັນປະຈຳຢູ່ ສ ປປ ລາວ ແລະ ຖືກຈົດນັບໃນເວລາສຳຫຼວດ	ຄາດເນພົນລະເມືອງແຕກຕ່າງລະຫວ່າງການສຳຫຼວດໃຫ່ຍ ແລະ ການສຳຫຼວດປະເມີນຄຸນນະພາບ (PES)	ຄາດຄະເນຈຳນວນພົນລະ ທີ່ດຳລົງຊີວິດເປັນປະຈຳຢູ່ ສ ປປ ລາວ (ອີງຕາມຜົນການສຳຫຼວດ PES)	ພົນລະເມືອງລາວທີ່ອາໄສຢູ່ຕ່າງປະເທດ (10 ປີ ຜ່ານມາ ແລະ ໃນເວລາສຳຫຼວດຍັງ ດຳລົງຊີວິດ ຢູ່ຕ່າງປະເທດ	ພົນລະເມືອງທັງໝົດ ລວມທັງຜູ້ທີ່ດຳລົງຊີວິດ ເປັນປະຈຳຢູ່ ສ ປປ ລາວ ແລະ ຄົນລາວ ທີ່ ອາໄສຢູ່ຕ່າງປະເທດ
ສ ປປ ລາວ	6,744,701	497,069	7,241,770	313,766	7,555,536
ນະຄອນຫຼວງວຽງຈັນ	892,939	66,590	959,529	14,449	973,978
ຜົ້ງສາລີ	188,228	11,200	199,428	1,434	200,862
ຫຼວງນ້ຳທາ	198,117	8,126	206,243	1,412	207,655
ອຸດົມໄຊ	352,858	17,033	369,891	4,197	374,088
ບໍ່ແກ້ວ	209,635	8,021	217,656	1,605	219,261
ຫຼວງພະບາງ	471,223	26,467	497,690	7,962	505,652
ຫົວພັນ	284,282	21,451	305,733	1,593	307,326
ໄຊຍະບູລີ	387,242	14,658	401,900	15,852	417,752
ຊຽງຂວາງ	287,099	11,525	298,624	2,302	300,926
ວຽງຈັນ	428,730	30,786	459,516	9,081	468,597
ບໍລິຄຳໄຊ	306,812	15,244	322,056	6,206	328,262
ຄຳມ່ວນ	389,244	28,928	418,172	23,519	441,691
ສະຫວັນນະເຂດ	905,413	79,130	984,543	127,694	1,112,237
ສາລະວັນ	423,429	41,368	464,797	35,561	500,358
ເຊກອງ	139,202	9,773	148,975	1,089	150,064
ຈຳປະສັກ	614,060	79,257	693,317	58,697	752,014
ອັດຕະປື	167,620	19,207	186,827	604	187,431
ໄຊສົມບູນ	98,568	8,305	106,873	509	107,382

ອັດຕາການເຕີບໂຕຂອງພົນລະເມືອງ

ປີສຳຫຼວດ	ຈຳນວນ ພົນລະເມືອງ	ອັດຕາການເຕບໂຕສະ ເລ່ຍຕໍ່ປີ (%)
1985	3,584,803	-
1995	4,574,848	2.47
2005	5,621,982	2.08
2015	6,492,228	1.45
2025	**7,241,770***	**1.1***

7,241,770* ຄາດຄເນະພົນລະເມືອງທັງໝົດທີ່ອາໄສເປັນປະຈຳຢູ່ ສ ປປ ລາວ ໃນປີ 2025 ລວມທັງຈົດນັບໄດ້ ແລະ ຈົດນັບບ່ໄດ້

ສົມທຽບການຄາດຄະເນພົນລະເມືອງຈາກການສຳຫຼວດໃນປີ 2015 ແລະ ຕົວເລກ ພົນລະເມືອງ ໃນປະຈຸບັນ ປີ 2025

	2015	2016	2017	2018	2019	2020	2021	2022	2023	2024	2025
ຄາດຄະນະພົນລະເມືອງໃນປີ 2015	6,492,228	6,787,007	6,900,846	7,012,995	7,123,205	7,231,210	7,337,783	7,442,749	7,545,792	7,646,723	7,745,249
ພົນລະເມືອງທີ່ຢູ່ເປັນປະຈຳຈາກ ການສຳຫຼວດໃຫ່ຍປີ 2025											6,744,701
ພົນລະເມືອງທີ່ຢູ່ເປັນປະຈຳຈາກ ການສຳຫຼວດໃຫ່ຍ ປີ 2025 (ລວມຜູ້ທີ່ບໍ່ຖືກຈົດນັບ)											7,241,770
ພົນລະເມືອງທີ່ຢູ່ເປັນປະຈຳ ຈາກ ການສຳຫຼວດໃຫ່ຍ ປີ 2025 (ລວມຜູ້ທີ່ບໍ່ຖືກຈົດນັບ ແລະ ຄົນ ລາວຢູ່ຕ່າງປະເທດ)											7,555,536
ພົນລະເມືອງຈາກການເກັບກຳ ອີງໃສ່ ສຳມະໂນຄົວ ຂອງ ກຊ ປກສ											7,600,000

ການວິເຄາະລົງເລິກ ສຳລັບພົນລະເມືອງ ທີ່ດຳລົງຊີວິດ ເປັນປະຈຳ ຢູ່ ສ ປປ ລາວ ທີ່ຈົດນັບໄດ້ຕົວຈິງ

ປີ 2025

(6,744,701ຄົນ)

2. ການແຈກຢາຍຂອງພົນລະເມືອງ

ໜຶ່ງໃນສາມຂອງພົນລະເມືອງ ແມ່ນອາໄສຢູ່ເຂດຊົນນະບົດ

ຕົວຊີ້ບອກ	2005	2015	2025
ເຂດຕົວເມືອງ (%)	27.1	32.9	34.5
ເຂດຊົນນະບົດມີເສັ້ນທາງເຂົ້າເຖິງ (%)	51.5	59.2	61.0
ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ (%)	21.3	7.9	4.5
ອັດຕາຄວາມໜາແໜ້ນຂອງພົນລະເມືອງ (persons per km^2)	24	27	28
ນະຄອນຫຼວງວຽງຈັນ (%)	–	12.6	13.2


ອັດຕາສ່ວນຮ້ອຍຂອງພົນລະເມືອງອາໄສຢູ່ເຂດຊົນນະບົດ ທີ່ບໍ່ມີເສັ້ນທາງເຂົ້າເຖິງ ແມ່ນຫຼຸດລົງຈາກ 21.3% ໃນປີ 2005 ເປັນ 4.5% ໃນປີ 2025.

ສຳລັບນະຄອນຫຼວງວຽງຈັນ 84.2% ແມ່ນອາໄສຢູ່ເຂດຕົວເມືອງ


3. ໂຄງປະກອບດ້ານເພດ ແລະ ອາຍຸ

ອັດຕາສ່ວນຮ້ອຍຂອງພົນລະເມືອງແບ່ງຕາມເພດ ແລະ ໝວດອາຍຸ (2005-2025)


ຮູບທາດອາຍຸ 2005



ຮູບທາດອາຍຸ 2015




ຮູບທາດອາຍຸ 2025



ໂຄງປະກອບດ້ານເພດ ແລະ ອາຍຸ

ພົນລະເມືອງກ້າວໄປສູ່ຜູ້ສູງອາຍຸ



ອາຍຸສະເລ່ຍຂອງພົນລະເມືອງ 2005-2025

18.5 → 27.0

(23.5 ໃນປີ 2015)

ອັດຕາການເອື່ອຍອີງ 2005-2025

76.4 → 53.8

(56.9 ໃນປີ 2015)

ອັດຕາການເອື່ອຍອີງໃນກຸ່ມຜູ້ສູງອາຍຸ 2005-2005

6.8 → 8.7

(6.6 ໃນປີ 2015)

4. ຄຸລັກສະນະທາງສັງຄົມ ແລະ ຄວາມເປັນພິການ

ອົງປະກອບທາງດ້ານຊົນເຜົ່າ ແລະ ສາດສະໜາແມ່ນ ຍັງຄົງເໝືອນເດີມ

ຕົວຊີ້ບອກ (%)	2005	2015	2025
ລາວ-ໄຕ	65	62.4	62.0
ມອນ-ຂະແມr	23	23.7	22.8
ມົ້ງ-ມຽນ	9	9.7	11.6
ຈີນ-ຕິເບດ	3	2.9	3.1
ສາສະໜາພຸດ	67	64.7	63.7
ຖືຜີ / ບໍ່ມີສາສະໜາ	–	31.4	33.7
ແຕ່ງງານ (15+ / 13+)	–	63.5	62.8

ຄວາມເປັນພິການ 1.9%

- ມີປະມານ 100,000 ຄົນ ອາຍຸ 10+ ແມ່ນມີຄວາມຫຍຸ້ງຍາກຫຼາຍ ຫຼື ບໍ່ສາມາດຊ່ວຍຕົວຢ່າງໜ້ອຍ ໜຶ່ງຢ່າງ.
- ຕົວເລກນີ້ ບໍ່ສາມາດປຽບທຽບກັບປີ 2015 (2.8%, ອາຍຸ 5+, ລວມທັງພິການສະໝອງ.

5. ການສຶກສາ

ອັດຕາການຮູ້ຫຍັງສືແມ່ນຫຼຸດລົງທຽບໃສ່ປີ 2015 ແລະ ການເຂົ້າໂຮງຮຽນຕ້ອງໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ເປັນພິເສດ

ຕົວຊີ້ບອກ (%)	2005	2015	2025
ອັດຕາການຮູ້ໜັງສື, ອາຍຸ 15+	72.7	84.7	83.5
– ຜູ້ຊາຍ	82.5	90.0	88.1
– ແມ່ຍິງ	63.2	79.4	78.9
ບໍ່ເຄີຍເຂົ້າໂຮງຮຽນ, ອາຍຸ 6+	23	13.1	17.7
ເດັກນ້ອຍອາຍຸ 6–16 ປີ ກຳລັງຮຽນ	–	79.6	71.0
ອັດຕາເຂົ້າຮຽນສຸດທຸໃນຊັ້ນປະຖົມ	–	–	75.7
ອັດຕາເຂົ້າຮຽນສຸດທິໃນຊັ້ນມັດທະຍົມປາຍ	–	–	27.9

ຄວາມບໍ່ສະເໝີພາບລະຫວ່າງແມ່ນມີສູງ

ອັດຕາການຮູ້ໜັງສືຂອງຜູ້ໃຫ່ຍ ແມ່ນ 88.1% ສຳລັບຜູ້ຊາຍ ແລະ 78.9% ສຳລັບແມ່ຍິງ. ໃນກຸ່ມພົນລະເມືອງໜຸ່ມ ອາຍຸ 15–24, ອັດຕາການຮູ້ໜັງສືກວມ 91.1%.

6. ຄຸນລັກສະນະທາງດ້ານເສດຖະກິດ

ອັດຕາການມີສ່ວນຮ່ວມຂອງກຳລັງແຮງງານຫຼຸດລົງ ໃນຂະນະທີ່ ການຈ້າງງານແບບມີຄ່າຈ້າງເພີ່ມຂຶ້ນ


	2005	2015	2025
ອັດຕາການມີສ່ວນຮ່ວມຂອງກຳລັງແຮງງານ	74	69.1	62.7
ອັດຕາການຈ້າງງານຕໍ່ພົນລະເມືອງລວມ	–	67.7	59.5
ອັດຕາການຫວ່າງງານ	1.4	2.1	5.1
ລູກຈ້າງ /ອັດຕາສ່ວນຮ້ອຍຂອງຜູ້ທີ່ມີວຽກເຮັດງານທຳ	12	18.6	28.3
ຜູ້ທີ່ເຮັດວຽກໃຫ້ຕົນເອງ	45	37.8	28.0
ຜູ້ທີ່ເຮັດວຽກໃຫ້ຄອບຄົວ	46	43.0	37.4

ອັດຕາການຫວ່າງງານຂອງໄວໜຸ່ມ ແມ່ນ 8.3%

1 ໃນ 12 ຄົນພົນລເມືອງໜຸ່ມ ທີ່ມີອາຍຸ 15–24 ທີ່ຢູ່ໃນກຳລັງແຮງງານ ແມ່ນຫວ່າງງານ.

ການຄິດໄລ່ອັດຕາການຫວ່າງງານໃນປີ 2015 ແມ່ນອັດແທກຈາກການເຮັດກິດຈະກຳໃນ 12 ເດືອນຜ່ານມາ, ສຳລັບໃນປີ 2025 ແມ່ນຖືເອົາ ອາທິດຜ່ານມາ.

ການຈ້າງງານແບ່ງຕາມຂະແໜງອຸດສະຫະກຳ



7. ສັນຊາດ ແລະ ການຍົກຍ້າຍລະຫວ່າງປະເທດ

ສ ປປ ລາວ ເປັນປະເທດທີ່ມີຄົນຍ້າຍອອກຫຼາຍກວ່າຍ້າຍເຂົ້າ

ສະມາຊິກໃນຄົວເຮືອນທີ່ໄປອາໄສຢູ່ຕ່າງປະເທດ

313,766

ເກືອບ 9 ເທ່າ ຂອງຈຳນວນປະຊາກອນເກີດຢູ່ຕ່າງປະເທດ 35,964 ຄົນ

ອາໄສຢູ່ປະເທດໄທ **90.9%**

ປະເທດຈີນເປັນອັນດັບສອງ **3%**

ໃນບັນດາຜູ້ຍ້າຍອອກ **57.4%**

ຜູ້ຊາຍ 74 ຄົນ ຕໍ່ ຜູ້ຍິງ 100 ຄົນ

ເຫດຜົນຂອງການຍ້າຍອອກ **85.1%** ແມ່ນເພື່ອໄປເຮັດວຽກ

ຜູ້ຍ້າຍອອກ 52.9% ແມ່ນອາຍຸ 15–29 ປີ

ສັນຊາດ (%)	2005	2015	2025
ສັນຊາດລາວ	99.6	99.3	98.8
ສັນຊາດຕ່າງປະເທດ	0.2	0.7	1.1

8. ການຍ້າຍຖິ່ນພາຍໃນ ແລະ ການຫັນເປັນເມືອງ

ຈຳນວນຜູ້ຍ້າຍຖິ່ນລະຫວ່າງເມືອງ ມີທ່າອ່ຽງຫຼຸດລົງ

ຕົວຊີ້ບອກ (%)	2005	2015	2025
ຜູ້ຍ້າຍຖິ່ນຕະຫຼອດຊີວິດ (ຜູ້ທີ່ເກີດຢູ່ເມືອງອື່ນ)	18	17	10.9
ຍ້າຍຖິ່ນໃນໄລຍະ 10 ປີຜ່ານມາ (ອາຍຸ 10 ປີຂຶ້ນໄປ)	–	7.4	5.5
ຜູ້ຍ້າຍຖິ່ນປັດຈຸບັນ	–	–	11.7
ພົນລະເມືອງໃນເຂດຕົວເມືອງ	27.1	32.9	34.5

ຄອບຄົວ ເປັນປັດໄຈຕົ້ນຕໍ/ແຮງຍູ້ດັນ ໃນການຍ້າຍຖິ່ນ

63% ຂອງຜູ້ຍ້າຍຖິ່ນປັດຈຸບັນ ຍ້າຍຍ້ອນເຫດຜົນດ້ານ ຄອບຄົວ, 25% ຍ້າຍຍ້ອນເຫດຜົນດ້ານວຽກງານ. ເກືອບ ໜຶ່ງໃນສາມ ຂອງປະຊາກອນຢູ່ ນະຄອນຫຼວງວຽງຈັນ ແມ່ນ ເກີດຢູ່ບ່ອນອື່ນ

9. ການຈະເລີນພັນ

ອັດຕາການເກີດ ຫຼຸດລົງເຄິ່ງໜຶ່ງ ນັບຕັ້ງແຕ່ປີ 2005 ເປັນຕົ້ນມາ

ອັດຕາການເກີດ (per 1,000) 2005-2015

37.7 → 18.1

(ໃນປີ 2025 ແມ່ນ 28 ຕໍ່ 1000)

ອັດຕາການຈະເລີນພັນລວມ 2005-2015

4.5 → 3.2

ອາຍຸສະເລ່ຍການເກີດລູກຜູ້ທຳອິດ ປີ 2025

23.5 ປີ

ຕົວເມືອງ 25.4 · ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 21.2

ຈຳນວນເດັກເກີດໃນ 12 ເດືອນຜ່ານມາ

122,000

ອັດຕາສ່ວນເພດໃນເວລາເກີດ 101.7

ຈຳນວນລູກເກີດມີຊີວິດສະເລ່ຍ ແມ່ຍິງ 15 ຂຶ້ນໄປ

2.4

ແມ່ຍິງອາຍຸ 15 ປີຂຶ້ນໄປ ທີ່ບໍ່ມີລູກ

ປະມານ 1 in 4

ຕົວເມືອງ 29.4% · ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 22.0%

10. ການເສຍຊີວິດ

ອັດຕາການຕາຍ ປີ 2025 ແມ່ນຈະໄດ້ເຮັດບົດລາຍງານສະເພາະ

ຕົວຊີ້ບອກ	2005	2015	2025
ອັດຕາການຕາຍຂອງເດັກອ່ອນ (ຕໍ່1,000 ການເກີດມີຊີວິດ)	70	57	ກຳລັງຄິດໄລ່
ອັດຕາການຕາຍຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ (ຕໍ່ 1,000 ການເກີດມີຊີວິດ)	98	86	ກຳລັງຄິດໄລ່
ອັດຕາການຕາຍຂອງແມ່ (100,000 ການເກີດມີຊີວິດ)	405	206	ກຳລັງຄິດໄລ່
ອາຍຸຍືນສະເລ່ຍຂອງເພດຊາຍ (ປີ)	59.1	61.8	ກຳລັງຄິດໄລ່
ອາຍຸຍືນສະເລ່ຍຂອງເພດຍິງ (ປີ)	63.0	65.2	ກຳລັງຄິດໄລ່
ການເສຍຊີວິດທີ່ໄດ້ຮັບການລາຍງານ ໃນ 12 ເດືອນຜ່ານມາ	–	27,083	23,806

Source: Population and Housing Censuses 2005, 2015 and 2025 (draft Main Report), Lao Statistics Bureau

11. ຄຸນລັກສະນະຂອງຄົວເຮືອນ

ຈຳນວນຄົວເຮືອນເພີ່ມຂຶ້ນ, ແຕ່ມີຂະໜາດນ້ອຍລົງ

ຈຳນວນຄົວເຮືອນສ່ວນບຸກຄົນ ປີ 2025

1.46 ລ້ານຄົວເຮືອນ

0.95 ລ້ານ in 2005 ➔1.18 ລ້ານ ໃນປີ 2015

ຂະໜາດສະເລ່ຍຂອງຄົວເຮືອນ ປີ 2025

4.5

5.8 ໃນປີ 2005 ➔ 5.3 ໃນປີ 2015

ແມ່ຍິງເປັນຫົວໜ້າຄົວເຮືອນ ປີ 2025

18.6%


10% ໃນປີ 2005 ➔13.2% ໃນປີ 2015

ໃນລະຫວ່າງປີ 2015 ຫາ 2025, ຈຳນວນຄົວເຮືອນໄດ້ເພີ່ມຂຶ້ນ 2,1% ຕໍ່ປີ, ເຊິ່ງໄວຫຼາຍກວ່າຈຳນວນປະຊາກອນ (0,38%) ເຖິງ 5 ເທົ່າ, ສະທ້ອນໃຫ້ເຫັນເຖິງອັດຕາການເກີດທີ່ຫຼຸດລົງ, ການຍ້າຍຖິ່ນ, ແລະ ການປ່ຽນແປງໄປສູ່ຄອບຄົວເດ່ຽວ.

Source: Population and Housing Censuses 2005, 2015 and 2025 (draft Main Report), Lao Statistics Bureau

ສິ່ງອຳນວຍຄວາມສະດວກຂອງຄົວເຮືອນ

ການເຂົ້າເຖິງການບໍລິການພື້ນຖານ ມີທ່າອ່ຽງທີ່ດີຂຶ້ນ



12. ທີ່ຢູ່ອາໄສ ແລະ ຊັບສິນຂອງຄົວເຮືອນ

ອັດຕາສ່ວນຮ້ອຍຂອງຄົວເຮືອນ (%)	2015	2025	ອັດຕາການປ່ຽນແປງ
ຝາເຮັດດ້ວຍດິນຈີ່ ຫຼື ຄອນກຣີດ	41.2	63.1	+21.9
ຫຼັງຄາເຮັດດ້ວຍກະເບື້ອງ, ຊີແພັກ ຫຼື ຄອນກີດ	42.3	60.1	+17.8
ພື້ນປູດ້ວຍຊີເມັນ ຫຼື ກະໂລ	24.8	43.5	+18.7
ມີລົດໃຫ່ຍ ຫຼື ລົດຕູ້	16.2	27.0	+10.8
ມີເຄື່ອງຊັກຜ້າ	19.7	42.9	+23.2
ມີເຄື່ອງປັບອາກາດ	7.6	21.0	+13.4
ມີຂອໂທລະສັບມືຖື	86.2	89.7	+3.5
ມີທໍລະທັດ	77.3	49.2	–28.1

Source: Population and Housing Censuses 2005, 2015 and 2025 (draft Main Report), Lao Statistics Bureau

ແນະນຳກ່ຽວກັບການນຳໃຊ້ຂໍ້ມູນ

7,241,770 ຄົນ
ຄາດຄະເນພົນລະເມືອງທັງໝົດທີ່ອາໄສເປັນປະຈຳ ຢູ່ ສ ປປ ລາວ

ນຳໃຊ້ເປັນຕົວຫານທີ່ແນະນຳໃຫ້ນຳໃຊ້ ສຳລັບການຄິດໄລ່ຕົວຊີ້ວັດທາງປະຊາ ກອນ ສາດ, ອັດຕາການເກີດ ແລະ ການຕາຍ, ອັດຕາການເຕີບໂຕ ແລະຄວາມໜາແໜ້ນ ຂອງພົນລະເມືອງ ແລະ ເປັນຖານພົນລະເມືອງທາງການສຳລັບການຄາດຄະເນພົນລະ ເມືອງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ, ສຳລັບການວາງແຜນຕໍ່ຫົວຄົນ, ການຈັດ ສັນຊັບພະຍາກອນ ແລະ ການກຳນົດເປົ້າໝາຍການສະໜອງການບໍລິການ.

7,555,536 ຄົນ
ພົນລະເມືອງທັງໝົດ ທີ່ອາໄສໃນ ສ ປປ ລາວ ແລະ ຢູ່ຕ່າງປະເທດ

ນຳສະເພາະຈຸດປະສົງທີ່ກ່ຽວຂ້ອງໂດຍກົງກັບພົນລະເມືອງລາວຢູ່ຕ່າງປະເທດເທົ່ານັ້ນ ຄື: ການວິເຄາະການຍົກ ຍ້າຍອອກ ແລະ ຊາວລາວຢູ່ຕ່າງປະເທດ, ນະໂຍບາຍແຮງ ງານເຄື່ອນຍ້າຍ ແລະ ການສົ່ງເງິນກັບບ້ານ, ແລະ ການວາງແຜນວຽກງານກົງສຸນ.

6,744,701 ຄົນ
ພົນລະເມືອງທັງໝົດທີ່ອາໄສເປັນ ປະຈຳ ຢູ່ ສ ປປ ລາວ ຈົດນັບໄດ້ໃນ ເວລາສຳຫຼວດ

ນຳໃຊ້ສຳລັບການວິໄຈທັງໝົດໃນບົດລາຍງານຜົນຂອງການສຳຫຼວດ ເນື່ອງຈາກມີຂໍ້ ມູນລາຍລະອຽດໃນລະດັບແຂວງ, ເມືອງ, ບ້ານ ແລະ ລະດັບບຸກຄົນ.

ແຜນຈັດຕັ້ງປະຕິບັດໃນຕໍ່ໜ້າ

1. ສືບຕໍ່ສ້າງບົດອົໄຈລົງເລິກ ກ່ຽວກັບ ສະພາບການເກີດ, ການຕາຍ, ການຍົກຍ້າຍ ແລະ ຄາດຄະເນປະຊາກອນ ຮອດປີ 2055 ໃຫ້ສຳເລັດ ໃນເດືອນ 12/2026;
2. ສືບຕໍ່ສ້າງບົດລາຍງານຂັ້ນແຂວງ ໃຫ້ສຳລັບທຸກໆແຂວງ ໃນຂອບເຂດທົ່ວປະເທດ ໃນເດືອນ 12/2026;
3. ຈັດສຳມະນາປຶກສາຫາລື ແລະ ສະເໜີ ຕໍ່ກັບການນຳໃຊ້ຂໍ້ມູນ ເຂົ້າໃນຂະບວນການຕິດຕາມ ແລະ ສ້າງແຜນຕົວຈິງ ໃຫ້ມີປະສິດທິພາບສູງສຸດ.

ขอบใจ